# ຫຸ່ນຍົນ AI ເຂົ້າຮ່ວມການແຂ່ງຂັນກິລາ



ຫວ່າງມໍ່ໆມານີ້, ທົ່ງຫຼິ້ນສະກີແຫ່ງຊາດຈີນ ໄດ້ຈັດງານກິລາຫຸ່ນຍົນຮູບຄົນຄັ້ງທຳອິດຂອງໂລກ ໂດຍມີນັກກິລາຫຸ່ນຍົນ 500 ກວ່າເຄື່ອງເຂົ້າຮ່ວມ ແຂ່ງຂັນ 26 ລາຍການເຊັ່ນ: ການແຂ່ງຂັນແລ່ນແລະ ລານ, ການເຕະບານ, ມວຍອູຊູ ແລະ ການທ້າທາຍໃນສະພາບຕົວຈິງ ເຊິ່ງເຮັດໃຫ້ຊາວເນັດທັງຫຼາຍຮູ້ສຶກ "ທັນສະໄໝຫຼາຍ" ແລະ ເປັນ "ການແຂ່ງຂັນແບບຍິ່ງໃຫຍ່". ໃນຊຸມປີຜ່ານມາ, ການແຂ່ງຂັນກິລາ ເຮັດໃຫ້ເຕັກນິກຫຸ່ນຍົນ ໄດ້ຮັບການພັດທະນາຢ່າງວ່ອງໄວ ແລະ ໄດ້ເປີດປະຕູສູ່ຕະຫຼາດອັນກວ້າງຂວາງ ເຊິ່ງເຮັດໃຫ້ທົ່ວໂລກ ມີຄວາມໃຝ່ຝັນຕໍ່ອະນາຄົດທີ່ມະນຸດ ແລະ ຫຸ່ນຍົນຢູ່ຮ່ວມກັນຢ່າງກົມກຽວກັນ.

## ງານກິລາກາຍເປັນສະໜາມທົດລອງ

ງານກິລາສາກົນ ເປັນສະໜາມທົດລອງວິທະຍາສາດເຕັກໂນໂລຊີທັນສະໄໝ ມາໂດຍຕະຫຼອດ. ຈາກລະບົບນັບເວລາ ແລະ ກ້ອງຖ່າຍຄວາມໄວສູງໃນງານກິລາໂອແລມປິກ, ເຖິງເຕັກນິກຕາແຫຼວ (eagle eye) ໃນການແຂ່ງຂັນເຕັນນິດ ແລະ ເຕັກນິກຊ່ວຍກຳມະການດ້ວຍວິດີໂອ (VAR) ໃນການແຂ່ງຂັນເຕະບານໂລກ, ມະນຸດເຮົາ ໄດ້ນຳໃຊ້ເຕັກນິກໃໝ່ ເຂົ້າໃນຂົງເຂດກິລາເລື້ອຍໆ. ງານກິລາຫຸ່ນຍົນ ກໍເປັນການທົດລອງສັງລວມວິທະຍາສາດເຕັກໂນໂລຊີຫຸ່ນຍົນຢ່າງໜຶ່ງ.

ທີມງານເຂົ້າຮ່ວມການແຂ່ງຂັນ ໄດ້ສະແດງໃຫ້ເຫັນເຖິງລະດັບເຕັກໂນໂລຊີ ທີ່ປະຈັກຕາຕໍ່ຊາວໂລກ ໃນງານກິລາຫຸ່ນຍົນຮູບຄົນຄັ້ງທຳອິດຂອງໂລກ.

ຫຸ່ນຍົນຮູບຄົນ H1 ຂອງບໍລິສັດວິທະຍາສາດເຕັກໂນໂລຊີຢູ່ຊູຂອງຈີນ ສາມາດຍາດໄດ້ແຊ້ມໃນການແຂ່ງຂັນແລ່ນ 1.500 ແມັດ ແລະ 400 ແມັດ. ທ່ານ ວາງຊິງຊິງ ຫົວໜ້າຝ່າຍບໍລິຫານຂອງບໍລິສັດກ່າວວ່າ: ຫຸ່ນຍົນທີ່ເຂົ້າຮ່ວມການແຂ່ງຂັນ ໄດ້ໃຊ້ຮາດແວອັນດຽວກັນກັບຫຸ່ນຍົນທີ່ເຂົ້າຮ່ວມການສະແດງໃນງານລາຕີສະຫຼອງບຸນກຸດຈີນ ປີ 2025 ຂອງວິທະຍຸໂທລະພາບສູນກາງຈີນ ຫຼື CMG ໂດຍໄດ້ຍົກຄວາມໄວການແລ່ນໃຫ້ສູງຂຶ້ນ 40% ດ້ວຍການຍົກລະດັບວິທີການໄລ່ລຽງ.

ໃນການແຂ່ງຂັນແລ່ນ 100 ແມັດ, ຫຸ່ນຍົນ "ຈູ້ເຊິນທຽນກຸງ Ultra" ຂອງທີມທຽນກຸງປັກກິ່ງ ສາມາດຄ້ວາແຊ້ມເຂົ້າເສັ້ນໄຊດ້ວຍເວລາ 21 ວິນາທີ 50 ລິບດາ. ນີ້ແມ່ນຫຸ່ນຍົນພຽງໜຶ່ງດຽວທີ່ໄດ້ນຳໃຊ້ລະບົບນຳທາງແບບອັດຕະໂນມັດ ແລະ ບໍ່ຕ້ອງການໃຫ້ຄົນບັນຊາຕະຫຼອດການແຂ່ງຂັນໃນງານກິລາຄັ້ງນີ້.

ໃນການແຂ່ງຂັນເຕະບານ, ຫຸ່ນຍົນ AI ໄດ້ເຕະບານກັນແບບ 5 ຕໍ່ 5 ແບບອັດຕະໂນມັດໃນຂອບເຂດທົ່ວໂລກ ເປັນຄັ້ງທຳອິດ. ຫຸ່ນຍົນທຸກ 10 ເຄື່ອງ ໄດ້ເຕະບານກັນແບບບໍ່ມີຄົນບັນຊາ ເຊິ່ງໄດ້ມີການວິນິໄສເປັນທ່າປ້ອງກັນ ແລະ ປະສານສົມທົບກັບທີມບານ. ໃນທີ່ສຸດ, ທີມຮົວເຊິນຂອງມະຫາວິທະຍາໄລຊິງຮວາຂອງຈີນ ໄດ້ເອົາຊະນະທີມປະສົມຂອງເຢຍລະມັນ ແລະ ໄດ້ແຊ້ມດ້ວຍຄະແນນ 1 ປະຕູຕໍ່ 0.

ສິ່ງທີ່ໜ້າສົນໃຈນັ້ນ ກໍຄື: ງານກິລາຄັ້ງນີ້ ບໍ່ພຽງແຕ່ມີລາຍການແຂ່ງຂັນກິລາດັ້ງເດີມເທົ່ານັ້ນ, ແຕ່ຍັງມີລາຍການທົດສອບລະດັບການປະຍຸກຕົວຈິງຂອງຫຸ່ນຍົນເຊັ່ນ: ການຕ້ອນຮັບແຂກ, ການຂົນສິ່ງເຄື່ອງ, ການຈັດສັນປະເພດຢາ, ການເຮັດອະນາໄມ ແລະ ອື່ນໆ.

ທ່ານ ຫຼົວຊາວຊານ ຫົວໜ້າສູນອັດສະລິຍະຫຸ່ນຍົນຮູບຄົນ ສະຖາບັນຄົ້ນຄວ້າປັນຍາປະດິດ ແລະ ຫຸ່ນຍົນນະຄອນເສິນເຈິ້ນຈີນ ເຫັນວ່າ: ງານກິລາບໍ່ພຽງແຕ່ໄດ້ທົດສອບເຕັກນິກຫຸ່ນຍົນ ຢ່າງຮອບດ້ານເທົ່ານັ້ນ, ແຕ່ຫາກຍັງໄດ້ລິງເລີກການຄົ້ນຄວ້າຄວາມສາມາດບົ່ມຊ້ອນຂອງຫຸ່ນຍົນ ໃນສະພາບຕົວຈິງຕ່າງໆ. ທ່ານກ່າວຕື່ມວ່າ: ຄວາມສາມາດຕ່າງໆ ທີ່ຫຸ່ນຍົນໄດ້ສະແດງອອກ ໃນງານກິລາຄັ້ງນີ້ ໄດ້ສ້າງພື້ນຖານໃຫ້ແກ່ການປະຍຸກຕົວຈິງໃນອະນາຄົດ.

ທ່ານ ຫຼີເຊິນຊີ ຈາກມະຫາວິທະຍາໄລຊິງຮວາເຫັນວ່າ: ການແຂ່ງຂັນກິລາ ໄດ້ສະໜອງສະພາບການທົດສອບທີ່ສັບສົນໃຫ້ແກ່ຫຸ່ນຍົນເຊັ່ນ: ການສຳຜັດກັບສະພາບແວດລ້ອມ, ການວິໄຈຂໍ້ມູນຂ່າວສານ, ການຕັດສິນຢ່າງທັນການ ແລະ ການຄວບຄຸມທ່າຫຼິ້ນກິລາ ເຊິ່ງເປັນມາດຕະການທີ່ຈຳເປັນໃນການຄົ້ນຄວ້າຫຸ່ນຍົນ. ທ່ານ ກ່າວຕື່ມວ່າ: ການແຂ່ງຂັນກິລາເປັນສະໜາມທົດລອງທີ່ດີ ໃຫ້ແກ່ເຕັກໂນໂລຊີຫຸ່ນຍົນ ແລະ ກໍແມ່ນບາດກ້າວສຳຄັນ ທີ່ໃຫ້ຫຸ່ນຍົນກ້າວເດີນອອກຈາກຫ້ອງທົດລອງ ແລະ ກ້າວໄປສູ່ການຜະລິດ ແລະ ຊີວິດການເປັນຢູ່ຕົວຈິງ.

## ຄູ່ຊ້ອມກິລາທີ່ດີ

ຫຸ່ນຍົນເຂົ້າຮ່ວມການແຂ່ງຂັນກິລາ, ຈະບໍ່ພຽງແຕ່ສ້າງກະແສຂ່າວເທົ່ານັ້ນ, ຄຽງຄູ່ກັບເຕັກນິກປັນຍາປະດິດ ໄດ້ມີການບຸກທະລຸເລື້ອຍໆ, ຫຸ່ນຍົນ AI ພວມໄດ້ເຂົ້າຮ່ວມອຸດສາຫະກຳກິລາຢ່າງເລິກເຊິ່ງ ແລະ ພວມປ່ຽນແປງອະນາຄົດຂອງອຸດສາຫະກຳກິລາ.

ປັດຈຸບັນ, ຢູ່ຈີນ, ນັກກິລາສາມາດຝຶກຊ້ອມກັບຫຸ່ນຍົນແບບ 1 ຕໍ່ 1 ເຊັ່ນ: ຫຼິ້ນເຕັກນິກ ຫຼື ຕີປິ່ງປ່ອງ, ລ້ວນແຕ່ມີຫຸ່ນຍົນເປັນຄູ່ຊ້ອມທີ່ດີ. ອາດເວົ້າໄດ້ວ່າ: ຫຸ່ນຍົນຮູບຄົນ ຈະກາຍເປັນຄູ່ຊ້ອມກິລາທີ່ດີສຳລັບຄົນທັງຫຼາຍ. ເວົ້າສຳລັບຜູ້ອອກກຳລັງກາຍແລ້ວ, ຫຸ່ນຍົນຮູບຄົນ ສາມາດເປັນຄູ່ອອກກຳລັງກາຍໄດ້ຕະຫຼອດ 24 ຊົ່ວໂມງ, ຍັງສາມາດປັບທ່າອອກກຳລັງກາຍໃຫ້ດ້ວຍມາດຕະຖານຂອງຄູ່ຝຶກ ເຊິ່ງສາມາດສ້າງຮູບການໃໝ່ໃຫ້ແກ່ການອອກກຳລັງກາຍຂອງຄົນທັງຫຼາຍ.

ຕາມການຄາດຄະເນວ່າ: ໃນອະນາຄົດ, ຫຸ່ນຍົນຮູບຄົນ ຈະບໍ່ພຽງແຕ່ສາມາດເຂົ້າຮ່ວມການແຂ່ງຂັນກິລາເທົ່ານັ້ນ, ແຕ່ຫາກຍັງສາມາດເປັນກຳມະການ, ເຂົ້າຮ່ວມການຝຶກຊ້ອມ ແລະ ຜະລິດອຸປະກອນກິລາ ພ້ອມທັງເປັນຜູ້ຊ່ວຍໃນອຸດສາຫະກຳຈໍລະຈອນສິນຄ້າ ແລະ ເປັນຜູ້ຕ້ອນຮັບແຂກເປັນຕົ້ນ ເພື່ອເຮັດໃຫ້ຜູ້ຊົມມີຄວາມຮູ້ສຶກທີ່ດີ ໃນການຊົມການແຂ່ງຂັນກິລາ. ເຕັກນິກຫຸ່ນຍົນ ຍັງສາມາດຊຸກຍູ້ການພັດທະນາການປະຕິບັດງານຢູ່ຕາມສະໜາມກິລາ, ການບໍລິການດ້ານການແຂ່ງຂັນກິລາ, ການຖ່າຍທອດກິລາ, ການອອກກຳລັງກາຍທົ່ວປວງຊົນ ແລະ ການບໍລິການດ້ານສຸຂະພາບ ເຊິ່ງຈະເພີ່ມພະລັງດ້ານອັດສະລິຍະເຂົ້າໃນການພັດທະນາອຸດສາຫະກຳກິລາ.

ໃນຂະນະດຽວກັນ, ຍີ່ຫໍ້ກິລາຕ່າງໆຂອງຈີນ ກໍໄດ້ພັດທະນາຫຸ່ນຍົນຮູບຄົນເຊັ່ນດຽວກັນ, ໂດຍຜ່ານຈາກການຮ່ວມກັນຜະລິດຜະລິດຕະພັນ, ການເຊັນສັນຍາຍຸດທະສາດ ແລະ ການສ້າງຫ້ອງທົດລອງຮ່ວມກັນ ເພື່ອເຂົ້າຮ່ວມການພັດທະນາໃນຂົງເຂດຫຸ່ນຍົນ ແລະ ຊຸກຍູ້ໃຫ້ວິທະຍາສາດເຕັກໂນໂລຊີ ແລະ ອຸດສາຫະກຳກິລາພັດທະນາແບບເຊື່ອມໂຍງເຂົ້າກັນ.

ຫວ່າງມໍ່ໆມານີ້, ບໍລິສັດ 361° ຂອງຈີນ ແລະ ບໍລິສັດສະແຕນດາດຂອງໂຮນລັງ ໄດ້ເຊັນສັນຍາຮ່ວມມືຍຸດທະສາດ, ສອງຝ່າຍ ຈະຮ່ວມກັນສ້າງຕັ້ງບໍລິສັດ AI ແຫ່ງໜຶ່ງ ແລະ ສ້າງຕັ້ງຫ້ອງທົດລອງຄົ້ນຄວ້າກິລາໃນອະນາຄົດ ໂດຍຈະຄົ້ນຄວ້າພັດທະນາເຄື່ອງນຸ່ງ, ເກີບ, ເຄື່ອງໃຊ້ຕ່າງໆສຳລັບຫຸ່ນຍົນ ເພື່ອຊຸກຍູ້ໃຫ້ການຜະລິດເຄື່ອງນຸ່ງດັ້ງເດີມເຊື່ອມໂຍງເຂົ້າກັບປັນຍາປະດິດ ແລະ ເລັ່ງລັດການຜະລິດແບບອັດສະລິຍະ ແລະ ການປະຕິຮູບຕ່ອງໂສ້ຄຸນຄ່າຂອງອຸດສາຫະກຳຂາຍຍ່ອຍ.

ເດືອນກໍລະກົດປີນີ້, ບໍລິສັດລີລິງຂອງຈີນ ໄດ້ເຊັນສັນຍາຮ່ວມມືຍຸດທະສາດກັບບໍລິສັດຮູບຄົນປັກກິ່ງ ໂດຍໄດ້ສ້າງຕັ້ງຫ້ອງທົດລອງກິລາວິທະຍາຂອງຫຸ່ນຍົນຮູບຄົນ ແຫ່ງທຳອິດຂອງຈີນ, ຮ່ວມກັນຊຸກຍູ້ການປະຍຸກຢ່າງຂະໜາດໃຫຍ່ ໃນການທົດລອງອຸປະກອນວິຊາການ ແລະ ສະພາບການບໍລິໂພກແບບອັດສະລິຍະຂອງຫຸ່ນຍົນຮູບຄົນ.

ກິລາ ແລະ ວິທະຍາສາດເຕັກໂນໂລຊີພັດທະນາແບບເຊື່ອມໂຍງເຂົ້າກັນ ໄດ້ກາຍເປັນທ່ວງທ່າໃຫຍ່ຂອງທົ່ວອຸດສາຫະກຳ. ປັດຈຸບັນ, ຫຸ່ນຍົນຮູບຄົນ ໄດ້ກາຍເປັນຈຸດສຸມໃນທ່ວງທ່າດັ່ງກ່າວ ເຊື່ອວ່າ: ຄຽງຄູ່ກັບຫຸ່ນຍົນຮູບຄົນ ໄດ້ຮັບການພັດທະນາຂຶ້ນເລື້ອຍໆ, "ມະນຸດ ແລະ ຫຸ່ນຍົນຮູບຄົນຢູ່ຮ່ວມກັນ ຢ່າງກົມກຽວກັນ" ຈະເຮັດໃຫ້ອຸດສາຫະກຳກິລາ ມີຄວາມອັດສະລິຍະກວ່າເກົ່າ ແລະ ດຶງດູດຄວາມສົນໃຈຈາກຄົນທັງຫຼາຍໄດ້ດີກວ່າເກົ່າ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)








ynzhanba@163.com
laos.yunnangateway.com